# ການປັບປ່ຽນເປັນເສດຖະກິດ ສີຂຽວຫຼັງຈາກການແຜ່ລະບາດ ຂອງ ພະຍາດໂຄວິດ-19

Toolkit for Parliamentarians

APHR
ASEAN PARLIAMENTARIANS FOR HUMAN RIGHTS

Hanns Seidel Foundation



# ໂອກາດໃນ "ການສ້າງຄືນໃຫ້ດີກວ່າເກົ່າ"

ພະຍາດໂຄວິດ-19 ແລະ ຜົນກະທົບທີ່ຕາມມາທາງດ້ານການຕົກຕໍ່າຂອງເສດຖະກິດ ໄດ້ສະແດງໃຫ້ເຫັນເຖິງຄວາມຫຼົ້ມເຫຼວ ແລະ ຄວາມບອບບາງຂອງລະບົບເສດຖະກິດ ທີ່ໃຫ້ບຸລິມະສິດທາງດ້ານທຸລະກິດຫຼາຍກວ່າຄົນ ແລະ ສິ່ງແວດລ້ອມ ອັນໃຫ້ເກີດຄວາມບໍ່ເທົ່າທຽມກັນຫຼາຍຂຶ້ນ ແລະ ບໍ່ສາມາດປົກປ້ອງສິ່ງທີ່ບອບບາງທີ່ສຸດໄດ້.

ເພື່ອທີ່ຈະຟື້ນຟູຈາກວິກິດທີ່ເກີດຈາກພະຍາດໂຄວິດ-19, ປັດຈຸບັນບັນດາປະເທດຕ່າງໆໄດ້ອອກມາດຕະການຟື້ນຟູເພື່ອກະຕຸ້ນເສດຖະກິດຂອງປະເທດຕົນ. ປະເພດແບບຈໍາລອງເສດຖະກິດຂອງບັນດາມາດຕະການເຫລົ່ານີ້ທີ່ຈະກະຕຸ້ນເສດຖະກິດແມ່ນສິ່ງຫນຶ່ງທີ່ທ້າທາຍໃນການປັບອະນາຄົດຂອງພວກເຮົາ ແລະ ສະຖານະການໃນປັດຈຸບັນນີ້ໄດ້ສະແດງໃຫ້ເຫັນໂອກາດທີ່ໜີຈາກອອກຈາກອະດີດ ແລະ ປັບປ່ຽນໃຫ້ ເສດຖະກິດທີ່ຍືນຍົງຂຶ້ນ ແລະ ປັບສະພາບໄດ້.

ການປັບປ່ຽນໄປສູ່ເສດຖະກິດສີຂຽວແມ່ນພາກສ່ວນທີ່ສໍາຄັນ ຂອງ **"ການສ້າງຄືນທີ່ດີກວ່າເກົ່າ"**

**ການຟື້ນຟູສີຂຽວ** ແມ່ນການອອກມາດຕະການເພື່ອເລັງໃສ່ກະຕຸ້ນການຟື້ນຟູຂອງເສດຖະກິດພ້ອມກັນກັບການລຸດການປ່ອຍກາສເຮືອນແກ້ວ ແລະ ຊ່ວຍຫຼຸດພາວະໂລກຮ້ອນ.

ບັນດາມາດຕະການດັ່ງກ່າວຈະສຸມໃສ່ການປ່ຽນຈາກອຸດສາຫະກໍາທີ່ເພິ່ງພາຈາກຊາກຟອກຊິວ (ເຊັ່ນ: ນໍ້າມັນ, ຖ່ານຫີນ ແລະ ອາຍແກັສ ແລະ ແທນທີ່ດ້ວຍການພັດທະນາພະລັງງານສະອາດ ແລະ ພະລັງງານທີ່ກັບມາໃຊ້ໄດ້ ເຊັ່ນ: ພະລັງງານແສງຕາເວັນ, ພະລັງງານຄວາມຮ້ອນຈາກພື້ນດິນ, ພະລັງງານລົມ ແລະ ພະລັງງານນໍ້າ.

# ຜົນປະໂຫຍດຂອງການຟື້ນຟູສີຂຽວ

## ☑ ຈໍາກັດພາສະໂລກຮ້ອນ

ອາຊີອາຄະເນແມ່ນຂົງເຂດທີ່ບອບບາງທີ່ສຸດຂອງໂລກຕໍ່ກັບຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ, ໄພຂົ່ມຂູ່ໃນການເຂົ້າເຖິງອາຫານ, ນໍ້າສະອາດ ແລະ ຊັບພະຍາກອນທໍາມະຊາດອື່ນໆ ແລະ ມີໂອກາດນໍາໄປສູ່ ຄວາມຂັດແຍ່ງ, ຄວາມທຸກຍາກ ແລະ ພະຍາດລະບາດເພີ່ມຂຶ້ນ.

ແຜນແມ່ບົດການຟື້ນຟູຮ່ວມກັນຂອງອາຊຽນ ໄດ້ຂຽນໄວ້ວ່າ "ການປ່ຽນແປງຂອງດິນຟ້າອາກາດແມ່ນຄວາມສ່ຽງທີ່ສໍາຄັນຕົ້ນຕໍຂອງອາຊຽນ" ແລະ "ມາດຕະການຕ່າງໆທີ່ຈະສາມາດລຸດຜ່ອນຄວາມຮຸນແຮງຈາກການປ່ຽນແປງຂອງກິນຟ້າອາກາດຈະຕ້ອງປະຕິບັດໃຫ້ທັນການ".

ດ້ວຍກອບເວລາທີ່ຈະໝົດໃນການຮັກສາພາວະໂລກຮ້ອນໃຫ້ຕໍ່າກວ່າ 1,5 °C ທີ່ໄດ້ລະບຸໄວ້ໃນສົນທິສັນຍາປາລີ, ກໍເປັນສິ່ງທີ່ທ້າທາຍທີ່ຈະປັບປ່ຽນນະໂຍບາບສໍາລັບການຟື້ນຟູສີຂຽວ

## ການສ້າງການຟື້ນຟູທີ່ໄວຂຶ້ນ ແລະ ເສດຖະກິດທີ່ປັບສະພາບໄດ້

- ການຮັກສາອຸນຫະພູມຂອງໂລກໃຫ້ຕໍ່າກວ່າ 2°C, ບັນດານັກຊ່ຽວຊານໄດ້ຄິດໄລ່ວ່າ ອາຊຽນສາມາດຫຼີກລ້ຽງການລຸດລົງ 25% ໃນ **GDP** ໃນທ້າຍສະຕະວັດນີ້.

- ການໃຊ້ກອງທຶນເພື່ອຟື້ນຟູຈາກພະຍາດໂຄວິດ-19 ທີ່ຈະລຸດຜ່ອນຄວາມສ່ຽງດ້ານດິນຟ້າອາກາດສາມາດປ້ອງກັນການເພີ່ມຂຶ້ນຂອງໜີ້ສິນໃນຂົງເຂດທີ່ບໍ່ຍືນຍົງ ເມື່ອຕອບໂຕ້ກັບບັນດາວິກິດທີ່ເກີດຈາກການປ່ຽນແປງຂອງດິນຟ້າອາກາດ ເຊັ່ນ ພະຍຸໄຕ້ຝຸ່ນ, ພະຍາດລະບາດ, ນໍ້າຖ້ວມ.

- ທະນາຄານພັດທະນາອາຊີ ໄດ້ປະເມີນການໃຊ້ຈ່າຍເງິນທຶນຈໍານວນ 172 ພັນລ້ານໂດລາສະຫະລັດ ໃນຂົງເຂດຂອງດິນຟ້າອາກາດທີ່ເປັນມິດ ເຊັ່ນ ພະລັງງານສະອາດ, ສາມາດສ້າງວຽກເຮັດງານທໍາໃຫ້ຄົນ 30 ລ້ານ ໃນອາຊີຕາເວັນອອກສ່ຽງໃຕ້ກ່ອນປີ 2030.

## ມາດຕະການທີ່ຈະສົ່ງເສີມການຟື້ນຟູສີຂຽວ

**ການອຸດໜູນລາຄາຂອງລັດຖະບານ ຫຼື ການລຸດພາສີສໍາລັບສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ:** ອິນໂດເນເຊຍ ແລະ ຟີລິບປິນໄດ້ລຸດພາສີ ສໍາລັບ ອຸດສາຫະກໍາ ແລະ ວິຫາທະກິດຂະໜາດນ້ອຍ ແລະ ກາງ ທີ່ປັບໃຊ້ພະລັງງານທີ່ໃຊ້ຄືນໄດ້.

**ເພີ່ມພາສີສໍາລັບສິນຄ້າທີ່ເປັນອັນທະລາຍຕໍ່ສິ່ງແວດລ້ອມ:** ສິງກະໂປຄາດວ່າຈະເພີ່ມພາສີນໍ້າມັນເຊື້ອໄຟຂຶ້ນເປັນ 15% ຕໍ່ລິດ ໃນການເປັນສ່ວນໜຶ່ງຂອງການສົ່ງເສີມການໃຊ້ລົດໄຟຟ້າ.

**ການລົງທຶນໃນການສ້າງໂຄງລ່າງພື້ນຖານຂອງພະລັງງານສະອາດ:** ອິນໂດເນເຊຍ, ມາເລເຊຍ ແລະ ສິງກະໂປໄດ້ໃຊ້ມາດຕະການນີ້ເພື່ອກະຕຸ້ນຜະລິດຕະພັນພະລັງງານແສງຕາເວັນ ເຊັ່ນ: ການຕິດຕັ້ງແຜ່ນພະລັງງານແສງອາທິດເທິງຫຼັງຄາ, ດອກໄຟເຍືອງທາງ LED ແລະ ສາຍສົ່ງພະລັງງານ.

**ການລົງທຶນໃນໂຄງລ່າງພື້ນຖານໃນການຂົນສົ່ງທີ່ສະອາດ:** ຟີລິບປິນໄດ້ໃຊ້ງົບປະມານໃນການພັດທະນາທາງຍ່າງທີ່ສາມາດໃຊ້ໄດ້ ແລະ ປົກປ້ອງເລນທາງສໍາລັບລົດຖີບ

**ສິ່ງກະຕຸ້ນສໍາລັບການໃຊ້ລົດໄຟຟ້າ:** ສິງກະໂປໄດ້ລຸດພາສີບາງສ່ວນສໍາລັບການຂຶ້ນລະບຽນລົດ ແລະ ອາກອນການຊົມໃຊ້ທາງ ສໍາລັບເຈົ້າຂອງລົດໄຟຟ້າໃນໄລຍະການລະບາດຂອງພະຍາດໂຄວິດ-19.

**ສິ່ງກະຕຸ້ນສໍາລັບພະລັງງານສະອາດ ແລະ ເຄື່ອງໃຊ້ໄຟຟ້າທີ່ປະຢັດພະລັງງານ:** ສິງກະໂປໄດ້ຈັດຫາບັດສ່ວນລຸດລະດັບຄົວເຮືອນທີ່ໃຊ້ເຄື່ອງໃຊ້ໄຟຟ້າທີ່ປະຢັດພະລັງງານ ແລະ ນໍ້າ ເຊັ່ນ, ຕູ້ເຢັນທີ່ເປັນມິດຕໍ່ສິ່ງແວດລ້ອມ, ຟັກບົວອາບນໍ້າທີ່ປະຢັດນໍ້າ ແລະ ດອກໄຟ LED.

**ສົ່ງເສີມການການປັບໂຄງສ້າງຕຶກ ແລະ ການສ້າງເຮືອນທີ່ເປັນມິດຕໍ່ສິ່ງແວດລ້ອມ:** ສິງກະໂປມີແຜນທີ່ຈະເພີ່ມການຊົມໃຊ້ພະລັງງານທີ່ໜ້ອຍທີ່ສຸດຂອງບັນດາຕຶກໃໝ່ ແລະ ຕຶກທີ່ມີຢູ່ໃນປັດຈຸບັນ ສະນັ້ນ ຢ່າງຕໍ່າ 80% ຂອງຕຶກອາຄານໃນສິງກະໂປຈະເປັນຕຶກສີຂຽວທີ່ເປັນມິດຕໍ່ສິ່ງແວດລ້ອມກ່ອນ ປີ 2030.

**ກອງທຶນສໍາລັບການພັດທະນາ ແລະ ຄົ້ນຄວ້າສະອາດ:** ປະເທດໄທໄດ້ໃຊ້ຈ່າຍເງິນຈໍານວນ 1 ພັນລ້ານ ໂດລາສະຫະລັດໃນໂຄງການຕ່າງໆ ສໍາລັບ ຕ່ອງໂສ້ການສະໜອງ, ການພັດທະນາ ແລະ ຄົ້ນຄວ້າການຜະລິດລົດໄຟຟ້າ.

**ການລົງທຶນໃນໂຄງລ່າງພື້ນຖານທາງທໍາມະຊາດ ແລະ ພື້ນທີ່ສີຂຽວ:** ສິງກະໂປໄດ້ໃຊ້ຊັບພະຍາກອນເພື່ອພັດທະນາແຫລ່ງທໍາມະຊາດຂອງປະເທດ.

**ການຝຶກອົບຮົມໃຫ້ຜູ້ເຮັດວຽກສີຂຽວ ແລະ ການສ້າງອາຊີບສີຂຽວ:** ປັດຈຸບັນຍັງບໍ່ມີຕົວຢ່າງໃນອາຊີຕາເວັນອອກສ່ຽງໃຕ້ ແຕ່ ປາກິສະຖານໄດ້ໃຊ້ສິ່ງສົ່ງເສີມສີຂຽວ ສໍາລັບຊາວໜຸ່ມ, ແມ່ຍິງທີ່ຫວ່າງງານ ແລະ ຜູ້ອອກແຮງງານລາຍມື້ ເພື່ອສາມາດຫາເງິນຈາກກິດຈະກໍາທີ່ກ່ຽວກັບທໍາມະຊາດ ເຊັ່ນ: ການປູກຕົ້ນໄມ້, ການປົກປ້ອງປ່າທໍາມະຊາດ ແລະ ການປັບປຸງການຊົມໃຊ້ນໍ້າທີ່ຖືກສຸຂະລັກສະນະ.

**ການຊຸກຍູ້ຈາກລັດຖະບານທີ່ມີເງື່ອນໄຂສໍາລັບ ທຸລະກິດທີ່ກໍ່ໃຫ້ເກີດມົນລະພິດ ໂດຍມີປ້າຍມັດເຊືອກສີຂຽວ:** ຍັງບໍ່ມີຕົວຢ່າງໃນອາຊີຕາເວັນອອກສ່ຽງໃຕ້ ແຕ່ ປະເທດຝຣັ່ງໄດ້ໃຊ້ເງື່ອນໄຂນີ້ໃຫ້ກັບບໍລິສັດການບິນ Air France ເຊັ່ນ: ການລຸດການໃຊ້ອາຍກາກໂບນິກລົງເຄິ່ງໜຶ່ງ ຕໍ່ ຜູ້ໂດຍສານໜຶ່ງຄົນ ຕໍ່ ໜຶ່ງກິໂລແມັດ ພາຍໃນປີ 2030 ແລະ ລຸດການຊົມໃຊ້ພາຍໃນປະເທດລົງເຄິ່ງໜຶ່ງໃນທ້າຍປີ 2024.

## ມາດຕະການທີ່ຈະຫຼີກລ້ຽງ ເພາະມາດຕະການເຫຼົ່ານີ້ເຮັດໃຫ້ພາວະໂລກຮ້ອນຂຶ້ນ ເຊິ່ງປະກອບມີ:

**ການສົ່ງເສີມທຸລະກິດທີ່ສ້າງມົນລະພິດທີ່ບໍ່ມີປ້າຍຫ້ອຍເຊືອກສີຂຽວ ຫຼື ຕ້ອງໄດ້ປັບເພື່ອໃຫ້ມີການປະຕິບັດທີ່ເປັນມິດຕໍ່ສິ່ງແວດລ້ອມ:** ອິນໂດເນເຊຍ ໄດ້ໃຊ້ງົບປະມານລັດໃຫ້ແກ່ ບໍລິສັດ PT Pertamina (ນໍ້າມັນເຊື້ອໄຟ ແລະ ອາຍແກັດ), Garuda Indonesia (ສາຍການບິນ), ແລະ PLN (ໄຟຟ້າ) ໂດຍງົບປະມານທັງໝົດຫຼາຍກວ່າ 6.29 ພັນລ້ານ ໂດລາສະຫະລັດ ໂດຍບໍ່ມີເງື່ອນໄຂ.

**ການສະເໜີການຊ່ວຍເຫຼືອດ້ານການອຸດໜູນລາຄາຈາກລັດ ຫຼື ຄ່າທໍານຽມສະຫຼະສິດ ສໍາລັບອຸດສາຫະກໍາທີ່ທໍາລາຍສິ່ງແວດລ້ອມ:** ອິນໂດເນເຊຍໄດ້ໃຊ້ເງິນມູນຄ່າ 2 ພັນລ້ານໂດລາສະຫະລັດໃນການໃຫ້ສ່ວນລຸດສໍາລັບການໃຊ້ພະລັງງານອາຍນໍ້າມັນຍົນ ສໍາລັບສາຍການບິນໃນ 9 ສະໜາມບິນ

**ການໃຫ້ການອຸດໜູນລາຄາ ຫຼື ການລຸດພາສີສໍາລັບຜະລິດຕະພັນທີ່ທໍາລາຍສິ່ງແວດລ້ອມ:** ອິນໂດເນເຊຍໄດ້ລຸດລາຄາໄຟຟ້າພາຍໃນປະເທດທີ່ມາຈາກເຊື້ອໄຟຟອກຊິວ ແລະ ອາຍແກັດອຸດສາຫະກໍາ

**ການຍົກເລີກມາດຕະຖານດ້ານສິ່ງແວດລ້ອມ:** ປະເທດຟິລິບປິນໄດ້ຍົກເລີກການເກືອດຫ້າມໃນແຮ່ທາດທໍາມະຊາດໃໝ່ ໃນດໍາລັດເລກທີ 130

## ສະມາຊິກສະພາ ສາມາດເຮັດຫຍັງໄດ້ແນ່?

- ນຳໃຊ້ບົດລາຍງານ "ການສ້າງຄືນທີ່ດີກວ່າເກົ່າ". ການປ່ຽນພາກພື້ນອາຊີອາຄະເນເປັນເສດຖະກິດສີຂຽວ ຫຼັງຈາກການລະບາດຂອງພະຍາດໂຄວິດ-19 ເພື່ອສົ່ງເສີມການປັບໃຊ້ນະໂຍບາຍການຟື້ນຟູສີຂຽວທີ່ໄດ້ກ່າວມາຂ້າງເທິງນີ້

- ໄດ້ຮຽກຮ້ອງມາຍັງລັດຖະບານເພື່ອສົ່ງເປົ້າໝາຍການລຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດລະດັບປະເທດ ໃຫ້ແກ່ ສົນທິສັນຍາປາຣີ

- ໃຫ້ບຸລິມະສິດດ້ານການເງິນແກ່ພະລັງງານທີ່ກັບມາໃຊ້ໄດ້, ການຂົນສົ່ງສາທາລະນະ, ການຊົມໃຊ້ພະລັງງານທີ່ຄຸ້ມຄ່າ, ລົດໄຟຟ້າ ແລະ ຂົງເຂດສຳຄັນຂອງເສດຖະກິດທີ່ປ່ອຍອາຍກາກບອນໜ້ອຍ.

- ການສົ່ງເສີມການລົງທຶນໃນການໂຄງລ່າງພື້ນຖານທຳມະຊາດ ແລະ ພື້ນທີ່ສີຂຽວ ເພື່ອຫຼຸດຜ່ອນຄວາມເສຍຫາຍຈາກໄພທຳມະຊາດທີ່ເກີດຈາກການປ່ຽນແປງດິນຟ້າອາກາດ ເຊັ່ນ ໄພນ້ຳຖ້ວມ

- ເຜີຍແພ່ສິດທິທາງດ້ານທຳມະຊາດ ແລະ ສິດທິມະນຸດໃນການພັດທະນາຖ່ານຫີນ ແລະ ນະໂຍບາຍອື່ນໆທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ

- ການສົ່ງເສີ່ມການມີສ່ວນຮ່ວມລະດັບເມືອງທີ່ມີຄວາມໝາຍເພື່ອໃຫ້ໝັ້ນໃຈວ່າການຟື້ນຟູສີຂຽວສາມາດສົ່ງເສີມສິດທິມະນຸດລາຍບຸກຄົນ

- ການປະຊຸມຂອງສະມາຊິກທີ່ກ່ຽວຂ້ອງເພື່ອໃຫ້ເຂົ້າໃຈຄວາມກັງວົນດ້ານສະພາບອາກາດທີ່ຮີບດ່ວນ, ແລະ ສະເໜີຕໍ່ລັດຖະບານ ແລະ

- ການໃຊ້ກຳມາທິການຂອງສະພາ ແລະ ການປະຊຸມປຶກສາຫາລືໃນບັນຫາການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນປະໂຫຍດຂອງເສດຖະກິດສີຂຽວ.

ສຳລັບຂໍ້ສະເໜີທີ່ເຈາະຈົງແຕ່ລະປະເທດສາມຄຣິກໄດ້ທີ່: ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ ແລະ ຕີມໍເລດສະເຕ

## ສຳລັບຂໍ້ມູນເພີ່ມຕື່ມ

- "ການສ້າງຄືນທີ່ດີກວ່າ", ການປັບປ່ຽນຂອງຂົງເຂດອາຊີຕາເວັນອອກສ່ຽງໃຕ້ເປັນເສດຖະກິດສີຂຽວຫຼັງຈາກການລະບາດຂອງພະຍາດໂຄວິດ-19
- ການຕອບໂຕ້ທາງດ້ານເສດຖະກິດຕໍ່ການລະບາດຂອງພະຍາດໂຄວິດ-19: ຖະແຫຼງການສະພາຂອງປະເທດອາຊຽນ
- ສາມາດຕິດຕໍ່ໄດ້ທີ່: info@aseanmp.org.



APHR ASEAN PARLIAMENTARIANS FOR HUMAN RIGHTS

SEPTEMBER 2021

Hanns Seidel Foundation